ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ພິທີສະເຫຼີມສະຫຼອງວັນສ້າງຕັ້ງ ບໍລິສັດລັດ ບໍລິຫານໜີ້ ແລະ ຊັບສິນ ຈຳກັດຜູ້ດຽວ




ໃນວັນທີ 04 ຕຸລາ 2024, ທີ່ໂຮງແຮມ ຄຣາວພຣາຊາ, ນະຄອນຫຼວງວຽງຈັນ ບໍລິສັດລັດ ບໍລິຫານໜີ້ ແລະ ຊັບສິນ ຈຳກັດຜູ້ດຽວ (ບລໜຊ) ໄດ້ຈັດພິທີສະເຫຼີມສະຫຼອງວັນສ້າງຕັ້ງ ບລໜຊ ຄົບຮອບ 1 ປີ ຂຶ້ນ ໂດຍການໃຫ້ກຽດເຂົ້າຮ່ວມໃນພິທີຄັ້ງນີ້ ຂອງທ່ານ ອາລຸນ ບຸນຍົງ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ, ປະທານສະພາບໍລິຫານ ບລໜຊ, ມີຄະນະສະພາບໍລິຫານ ບລໜຊ, ຄະນະອຳນວຍການ ບລໜຊ, ຕາງໜ້າຈາກກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍພະນັກງານພາຍໃນ ບລໜຊ ເຂົ້າຮ່ວມຢ່າງພ້ອມພຽງ.

ພິທີສະເຫຼີມສະຫຼອງໃນຄັ້ງນີ້ ໄດ້ຮັບຟັງທ່ານ ນ ທິບພະວັນ ຈັນທະຜາສຸກ ຜູ້ອຳນວຍການ ບລໜຊ ສະຫຼຸບຕີລາຄາການເຄື່ອນໄຫວວຽກງານຂອງ ບລໜຊ ຕະຫຼອດໄລຍະ 1 ປີຜ່ານມາ ຊຶ່ງສ່ອງແສງໃຫ້ເຫັນຜົນງານ ແລະ ຜົນສຳເລັດຫຼາຍດ້ານພ້ອມທັງໄດ້ຕີລາຄາດ້ານດີ, ດ້ານອ່ອນ-ຂໍ້ຄົງຄ້າງ ແລະ ກຳນົດທິດທາງແຜນການໃນຕໍ່ໜ້າ.




ໃນພິທີໄດ້ຮັບຟັງການມີຄຳເຫັນແລກປ່ຽນຕໍ່ກັບການເຄື່ອນໄຫວວຽກງານຂອງ ບລໜຊ ຈາກ ທ່ານ ສີວິໄລ ທະວີສິນ ຄະນະສະພາບໍລິຫານ ບລໜຊ ກ່ຽວກັບການເກັບກູ້ໜີ້ ແລະ ແກ້ໄຂໜີ້ ຜ່ານຂະບວນການຍຸດຕິທຳ ແລະ ທ່ານ ນ ມະນີສຸກ ໄຊຍະວົງສາ ຄະນະສະພາບໍລິຫານ ກ່ຽວກັບວຽກງານບັນຊີ ແລະ ການກວດສອບບັນຊີຂອງ ບລໜຊ, ພ້ອມທັງ ຍັງໄດ້ມີການປະກອບຄຳເຫັນຈາກ ທ່ານ ຄຳແກ້ວ ວິສີສົມບັດ ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ແລະ ທ່ານ ຈິນດາໄມ ວິໄລຫົງສ໌ ຜູ້ອຳນວຍການບໍລິສັດຂ່າວສານສິນເຊື່ອ ແຫ່ງ ສປປ ລາວ ຊຶ່ງທັງສອງພາກສ່ວນ ໄດ້ສະແດງຊົມເຊີຍຕໍ່ຜົນສຳເລັດຂອງ ບລໜຊ ແລະ ພ້ອມທີ່ຈະໃຫ້ຄວາມຮ່ວມມືໃນຖານະຄູ່ຮ່ວມຍຸດທະສາດ ເພື່ອພ້ອມກັນປະຕິບັດໜ້າທີ່ການເມືອງທີ່ຂັ້ນເທິງມອບໝາຍຢ່າງມີຜົນສຳເລັດ. ເພື່ອເປັນການຢັ້ງຢືນເຖິງຜົນງານທີ່ ບລໜຊ ຍາດມາໄດ້ນັ້ນ, ປະທານສະພາບໍລິຫານ ໄດ້ເປັນກຽດມອບໃບຍ້ອງຍໍຜົນງານການປະຕິບັດງານປະຈຳປີ 2023 ໃຫ້ພະນັກງານ ບລໜຊ ເປັນປະເພດ ດີຫຼາຍ 14 ທ່ານ, ປະເພດດີ ຈຳນວນ 27 ທ່ານ. ຊຶ່ງໃນພິທີ ທີ່ມີຄວາມໝາຍ ຄວາມສຳຄັນນີ້ ທ່ານ ອາລຸນ ບຸນຍົງ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ, ປະທານສະພາບໍລິຫານ ໄດ້ໃຫ້ກຽດມີຄຳເຫັນໂອ້ລົມໃນພິທີດັ່ງກ່າວແລະໃຫ້ທິດເຍືອງທາງພ້ອມທັງໄດ້ຕີລາຄາຜົນສຳເລັດ ແຕ່ລະດ້ານເປັນຕົ້ນ: ການຊີ້ນຳ-ນຳພາຄະນະສະພາບໍລິຫານ, ຄະນະອຳນວຍການ, ການເຄື່ອນໄຫວວຽກງານຂອງພະນັກງານ ທີ່ໄດ້ສຸມທຸກສະຕິປັນຍາ-ເຫື່ອແຮງ ແລະ ພ້ອມກັນປະຕິບັດຕາມໜ້າທີ່ການເມືອງຂັ້ນເທິງມອບໝາຍໃຫ້ຢ່າງມີຜົນສຳເລັດ.

ພິທີສະເຫຼີມສະຫຼອງວັນສ້າງຕັ້ງ ບລໜຊ ຄົບຮອບ 1 ປີ ແມ່ນໄດ້ດຳເນີນເປັນເວລາເຄິ່ງວັນ, ດ້ວຍບັນຍາກາດອັນຟົດຟື້ນ ແລະ ມີເນື້ອໃນເລິກເຊິ່ງ, ພິທີໄດ້ປິດລົງດ້ວຍຜົນສຳເລັດ ຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

**ຂ່າວ: ບໍລິສັດລັດ ບໍລິຫານໜີ້ ແລະ ຊັບສິນ ຈຳກັດຜູ້ດຽວ**
**ພາບ: ສົມພິດ ທຳມະວົງ**

*ຢູ່ເມືອງລາວໃຊ້ເງິນກີບລາວ*